ສຳນັກງານ ຄຄຊ
ຂາເຂົ້າ
ເລກທີ 1038
ວັນທີ 19 SEP 2017
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 42 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 18 ກັນຍາ 2017

## ລາຍງານການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
## ປະຈຳອາທິດທີ 28/08-01/09/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ. ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0.80% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງສະຫະລັດອາເມລິກາ ອອກມາບໍ່ດີ ເປັນຕົ້ນແມ່ນດຸນການຄ້າຂາດດຸນ 65.1 ຕື້ໂດລາສະຫະລັດ ຂອງເດືອນ 07/2017 ຈາກຂາດດຸນ 64 ຕື້ໂດລາສະຫະລັດ ໃນເດືອນຜ່ານມາ ແລະ ຍອດຂາຍບ້ານໃໝ່ທີ່ກຳລັງກໍ່ສ້າງ ຫຼຸດລົງ 0.50% ຂອງເດືອນ 07/2017 ຈາກເພີ່ມຂຶ້ນ 0.40% ໃນເດືອນດຽວກັນຂອງປີຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 21-25/08/2017 | ອາທິດນີ້ 28/08-01/09/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1.1797 | 1.1892 | -0.80% |
| ເຢນ/ໂດລາ | 109.62 | 110.10 | -0.44% |
| ບາດ/ໂດລາ | 33.290 | 33.170 | 0.36% |
| ເປໂຊ/ໂດລາ | 51.05 | 51.15 | -0.19% |
| ຣູເປັຍ/ໂດລາ | 13.345 | 13.342 | 0.02% |
| ໂດລາສິງກະໂປ/ໂດລາ | 1.3601 | 1.3569 | 0.24% |
| ຢວນ/ໂດລາ | 6.6607 | 6.5680 | 1.41% |

#### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນເພີ່ມຂຶ້ນ 1.51% ຈາກ 48.30 ໂດລາ/ບາເຣວ ມາເປັນ 49.03 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນດິບຂອງສະຫະລັດອາເມລິກາ ຫຼຸດລົງ 5.39 ລ້ານບາເຣວ ຂອງອາທິດທີ 25/08/2017 ຈາກຫຼຸດລົງ 3.33 ລ້ານບາເຣວ ໃນອາທິຜ່ານມາ;

- ສໍາລັບລາຄາຄໍາເພີ່ມຂຶ້ນ 2,37% ຈາກ 1.287,73 ໂດລາ/ອອນ ມາເປັນ 1.318,26 ໂດລາ/ອອນ ເນື່ອງຈາກກອງທຶນ SPDR ໄດ້ເຂົ້າຊື້ຄໍາ ແລະ ສັນຍາຊື້-ຂາຍຄໍາ ເພີ່ມຂຶ້ນ 11,23 ໂຕນ ເປັນ 816,43 ໂຕນ ໃນວັນທີ 29/08/2017 ຈາກ 805,20 ໂຕນ ໃນວັນທີ 25/08/2017.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,22% ແຕ່ອ່ອນຄ່າລົງ 0,49% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບແຂງຄ່າຂຶ້ນ 0,002% ທຽບໃສ່ສະກຸນເງິນໂດລາ ແຕ່ອ່ອນຄ່າລົງ 7.03% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 21-25/08/2017 | | | ອາທິດນີ້ 28/08-01/09/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.345,81 | 8.365,79 | 8.353,63 | 8.323,01 | 8.353,15 | 8.335,46 | 0,27% | 0,15% | 0,22% | -0,08% | 0,01% | 0,002% |
| ບາດ | 250,57 | 251,38 | 251,08 | 251,62 | 252,72 | 252,32 | -0,42% | -0,53% | -0,49% | - -7,17% | -6,97% | -7,03% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈໍາອາທິດນີ້ ຫຼຸດລົງ 2,05% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 28,65%;
- ປະລິມານເງິນ M2 ຫຼຸດລົງ 0,27% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 17,02%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈໍາອາທິດ (25-31/08/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 12,71 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 53,29 ລ້ານໂດລາ ແລະ ຂາຍໂດລາໄດ້ 40,58 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 1.163,85 ລ້ານບາດ (ໃນນີ້ ຊື້ບາດໄດ້ 172,74 ລ້ານບາດ ແລະ ຂາຍບາດໄດ້ 1.336,59 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາຫຼຸດລົງ 15,25% ແລະ ເງິນບາດຫຼຸດລົງ 25,27%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈໍານວນ 14,24 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈໍານວນ 61,50 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈໍານວນ 7,10 ລ້ານໂດລາລະຫະລັດ ແລະ ເງິນບາດ ຈໍານວນ 127,58 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້-ຂາຍເງິນໂດລາສຸດທິ ຈໍານວນ 0,08 ລ້ານໂດລາ ແລະ ເງິນບາດ ຈໍານວນ 0,21 ລ້ານບາດ.

1 % ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍທຸກໆ [illegible]

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 18-24/08/2017 | | ອາທິດທີ 25-31/08/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **73,31** | **200,32** | **53,29** | **172,74** | **-26,30%** | **-13,77%** |
| - ທ/ຄທຸລະກິດລັດ | 9,38 | 30,54 | 9,51 | 57,53 | 1,39% | 88,38% |
| - ທ/ຄທຸລະກິດອື່ນໆ | 62,93 | 169,78 | 43,78 | 115,21 | -30,43% | -32,14% |
| **2. ການຂາຍເງິນຕາຕ່າງປະເທດ** | **38,45** | **1.819,32** | **40,58** | **1.336,59** | **5,54%** | **-36,53%** |
| - ທ/ຄທຸລະກິດລັດ | 15,22 | 101,02 | 21,04 | 195,36 | 38,24% | 93,39% |
| - ທ/ຄທຸລະກິດອື່ນໆ | 23,23 | 1.718,30 | 19,54 | 1.141,23 | -15,88% | -33,58% |
| **ຊື້-ຂາຍສຸດທິ ທທກ** | **33,86** | **-1.619,00** | **12,71** | **-1.163,85** | **-62,46%** | **-26,11%** |
| - ຜົດຕ່າງ ຊື້-ຂາຍ | 46,83% | -808,21% | 23,85% | -673,76% | -49,07% | -16,64% |
| - ມູນຄ່າການຊື້-ຂາຍ | **110,76** | **2.019,64** | **93,87** | **1.509,33** | **-15,25%** | **-25,27%** |
| **3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-10,41** | **-31,00** | **-14,24** | **-61,50** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 10,41 | 31,00 | 14,24 | 61,50 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **3,64** | **58,25** | **7,10** | **127,58** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **50,13** | **0,00** | **0,08** | **0,21** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 50,13 | 0,00 | 0,12 | 0,21 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,04 | 0,00 | | |

## 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 08/2017 ຄາດວ່າຈະຢູ່ໃນລະດັບ 0.11% ເພີ່ມຂຶ້ນຈາກ -0.03% ໃນເດືອນ 07/2017.

## 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດ ໃນອາທິດນີ້ ຫຼຸດລົງ 75.3% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 33.81 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 51.7% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 82.93 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 981 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 352 ສະບັບ ເທົ່າກັບ 55.96% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 542.73 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 254.68 ຕື້ກີບ ເທົ່າກັບ 88.41% ເມື່ອທຽບໃສ່ອາທິດຜ່ານມາ:

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (25-31/08/2017) ມີທັງໝົດ 3.490 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 3.334 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 334.82 ຕື້ກີບ ຈາກ 1.185.79 ຕື້ກີບ ມາເປັນ 850.79 ຕື້ກີບ ເທົ່າກັບ 28.23%:

- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 156 ຄັ້ງ, ມູນຄ່າການໂອນໃນອາທິດຜ່ານມາ ເຫັນວ່າ ຫຼຸດລົງ 275,82 ຕື້ກີບ ຈາກ 290,64 ຕື້ກີບ ມາເປັນ 14,82 ຕື້ກີບ ເທົ່າກັບ 94,90%.

4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.030,43 ຈຸດ ເພີ່ມຂຶ້ນ 1,15% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 781.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,48 ຕື້ກີບ ເພີ່ມຂຶ້ນ 190,70% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 27,57% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 21-25/08/2017 | ດັດຊະນີອາທິດທີ 28/08-01/09/2017 | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.018,72 | 1.030,43 | 1,15 | |

ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX) (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ(ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 290.400 | 1.527.755.000 | 5.261 | 426.600 | 2.235.800.000 | 5.241 | 46,90 | 46,35 | -20 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 2.700 | 13.700.000 | 5.074 | 152.200 | 766.195.000 | 5.034 | 5.537,04 | 5.492,66 | -40 |
| ບໍລິສັດລາວເວີນ ມະຫາຊົນ | - | - | 7.600 | 199.800 | 1.478.550.000 | 7.600 | - | - | - |
| ບໍລິສັດປີໂຕລ້ຽມເທຣດດິ້ງລາວ ມະຫາຊົນ | - | - | 2.000 | 1.000 | 1.925.000 | 2.000 | - | - | - |
| ບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ | 700 | 2.030.000 | 2.900 | 1.500 | 4.500.000 | 3.000 | 114,29 | 121,67 | 100 |
| ທັງໝົດ | 293.800 | 1.543.485.000 | 5.254 | 781.100 | 4.486.970.000 | 5.744 | 165,86 | 190,70 | |

3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ຈັດກອງປະຊຸມຕ່າງໆ: ❶ ກອງປະຊຸມກົມການເມືອງ ທີ່ (ຫ້ອງປະຊຸມກົມການເມືອງ ຫຼັກ 6): ❷ ກອງປະຊຸມສະພາບໍລິຫານ ສະຖາບັນການທະນາຄານ ທີ່ (ສທຄ): ❸ ກອງປະຊຸມຄົບຄະນະຂອງກຳມາທິການແຜນການ. ການເງິນ ແລະ ການກວດສອບ ປະຈຳປີ 2017 ທີ່ (ຫ້ອງປະຊຸມຄະນະຈັດຕັ້ງສູນກາງພັກ

ຫຼັກ 6); ❹ ກອງປະຊຸມເຜີຍແຜ່ນິຕິກຳກ່ຽວກັບວຽກງານ AML/CFT ໃຫ້ກັບຫົວໜ່ວຍທີ່ມີໜ້າທີ່ໃນການລາຍງານ ໂດຍສະເພາະຮ້ານແລກປ່ຽນເງິນຕາ ແລະ ບໍລິສັດກວດສອບບັນຊີ.

- ຄະນະຜູ້ວ່າການໄດ້ສຳເລັດການບຳລຸງສາພາຕ່າງປະເທດ ຢູ່ປະເທດສິງກະໂປ (ໄລຍະ 1 ເດືອນ);

- ສຳເລັດການຕ້ອນຮັບແຂກເຂົ້າພົບປະຄະນະຜູ້ວ່າການ ທຫລ ມີ: ທ່ານ Jean Christophe Carret, ຜູ້ຕາງໜ້າຫ້ອງການທະນາຄານໂລກຄົນ ໃໝ່ ປະຈຳ ສປປ ລາວ ແລະ ຜູ້ຕາງໜ້າຈາກ ສະພາທຸລະກິດອາເມລິກາ-ອາຊຽນ (US-ASEAN Business Council);

- ເຂົ້າຮ່ວມຊົມຫ້ອງວາງສະແດງຮູບພາບການພົວພັນຮ່ວມມື ລະຫວ່າງກະຊວງປ້ອງກັນຄວາມສະຫງົບ ສປປ ລາວ ແລະ ກະຊວງຕຳຫຼວດ ສສ. ຫວຽດນາມ ກ່ຽວກັບວຽກງານປ້ອງກັນ ສະກັດກັ້ນ ແລະ ຕ້ານອາຊະຍາກຳ ເພື່ອສະເຫຼີມສະຫຼອງວັນປະຫວັດສາດລາວ-ຫວຽດນາມ.

## III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;

- ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ສຳມະນາຕ່າງໆ: ❶ ກອງປະຊຸມປຶກສາຫາລືກ່ຽວກັບ ແຜນເງິນຕາປະຈຳປີ 2017 ແລະ ທິດທາງແຜນການປະຈຳປີ 2018 ທີ່ຈະລາຍງານຕໍ່ກອງປະຊຸມລັດຖະບານເປີດກວ້າງ ທີ່ (ກພສ); ❷ ກອງປະຊຸມຄະນະປະຈຳພັກ-ຄະນະຜູ້ວ່າການ ທຫລ ປະຈຳເດືອນ ກັນຍາ 2017 ທີ່ (ທຫລ); ❸ ກອງປະຊຸມການປະເມີນຄວາມສ່ຽງລະດັບຊາດກ່ຽວກັບວຽກງານຕ້ານການຟອກເງິນ ທີ່ (ທຫລ); ❹ ກອງປະຊຸມລັດຖະບານເປີດກວ້າງກາງປີ ໃນເດືອນ ກັນຍາ 2017 ທີ່ (ຫໍປະຊຸມແຫ່ງຊາດ); ❺ ກອງປະຊຸມສ່ອງແສງສາຍພັກ-ສາຍລັດ ປະຈຳເດືອນ ສິງຫາ 2017 ທີ່ (ທຫລ); ❻ ພິທີຊຸມນຸມສະເຫຼີມສະຫຼອງ 2 ວັນ ປະຫວັດສາດ ລາວ-ຫວຽດນາມ, ຫວຽດນາມ-ລາວ ປີ 2017 ທີ່ (ຫໍວັດທະນະທຳແຫ່ງຊາດ) ແລະ ❼ ສຳມະນາຫົວຂໍ້ "ການຮັກສາສຸຂະພາບ" ທີ່ (ທພລ ສຳນັກງານໃຫຍ່).

- ສືບຕໍ່ຈັດກອງປະຊຸມດຳເນີນຊີວິດການເມືອງປັບປຸງປົວແປງພັກຢູ່ບັນດາຮາກຖານພັກທີ່ຂຶ້ນກັບອົງຄະນະພັກ ທຫລ;

ຫົວໜ້າຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ